Department of Health and Human Services
Centers for Disease Control and Prevention

[ອັນຕະລາຍຕໍ່ສິ່ງແວດລ້ອມແລະຜົນກະທົບຕໍ່ສຸຂະພາບ]

# ພິດຈາກທາດຄາບອນ ໂມນັອກໄຊດ໌

## ແນວທາງໃນການປ້ອງກັນ

**ທ່ານສາມາດປ້ອງກັນການຖືກພິດຂອງທາດຄາບອນ ໂມນັອກໄຊດ໌ ໄດ້**

- **ຈົ່ງ**ໃຫ້ຊ່າງຜູ້ຊ່ຽວຊານເປັນຜູ້ບໍາລຸງສ້ອມແປງ ລະບົບເຮັດຄວາມຮ້ອນ ແລະລະບົບເຜົາໄໝ້ແກ໊ສ, ນ້ຳມັນ ຫຼືຖ່ານຫີນໃນທຸກໆ ປີ.
- **ຈົ່ງ**ຕິດຕັ້ງເຄື່ອງມືແບບໃຊ້ຖ່ານສໍາລັບກວດຄົ້ນຫາທາດພິດຄາບອນ ໃນເຮືອນຂອງທ່ານ ແລະກວດເບິ່ງ ຫຼືປ່ຽນຖ່ານ ເມື່ອທ່ານປ່ຽນເວລາໃນໂມງຕັ້ງຂອງທ່ານໃນແຕ່ລະ ລະດູໃບໄມ້ປົ່ງແລະລະດູໃບໄມ້ຫຼົ່ນ. ຖ້າວ່າ ເຄື່ອງມືກວດຄົ້ນຫາສິ່ງສຽງດັງຂຶ້ນ ໃຫ້ຟ້າວປະອອກຈາກເຮືອນຂອງທ່ານທັນທີ ແລະໂທຣຫາ 911.
- **ຈົ່ງ**ຊອກຫາການຊ່ວຍເຫຼືອທາງການແພດທັນທີ ຖ້າຫາກ ທ່ານສົງໃສວ່າຈະຖືກພິດຂອງທາດຄາບອນ ແລະ ຮູ້ສຶກຕາລາຍ, ວິນຫົວ, ຫຼື ປວດຮາກ.
- **ຢ່າ**ໃຊ້ຈັກໄຟຟ້າ, ເຕົາປີ້ງທີ່ໃຊ້ຖ່ານ, ເຕົາໄຟສໍາລັບໃຊ້ໃນແຄ້ມປ໌, ຫຼືອຸປະກອນທີ່ໃຊ້ແກ໊ສ ຫຼືຖ່ານໄມ້ ພາຍໃນເຮືອນ, ຫ້ອງໃຕ້ດິນ, ຫຼືບ່ອນໄວ້ລົດ ຫຼື ໃກ້ປ່ອງຢ້ຽມ.
- **ຢ່າ**ເດີນເຄື່ອງຈັກຣົຖຍົນ ຫຼືຣົຖບັນທຸກ ພາຍໃນບ່ອນໄວ້ຣົຖທີ່ຢູ່ຕິດກັບເຮືອນຂອງທ່ານ, ເຖິງແມ່ນວ່າ ທ່ານຈະເປີດປະຕູໄວ້.
- **ຢ່າ**ເຜົາສິ່ງໃດກໍຕາມໃນເຕົາເຜົາ ຫຼືເຕົາຝີງໄຟ ທີ່ບໍ່ມີທາງລະບາຍອາກາດ.
- **ຢ່າ**ເຮັດໃຫ້ເຮືອນຂອງທ່ານອຸ່ນດ້ວຍເຕົາອົບທີ່ໃຊ້ແກ໊ສ.